# ສິລະປະ
# ລາຍລາວ
## ພາກ II



ກະຊວງ ວັດທະນະທຳ

# ບົດນຳ ສິລະປະລາຍລາວ

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຮັບມອບໝາຍຈາກກົມ ກົດກະຊວງວັດທະນະທຳ ໃຫ້ຄົ້ນຄ້ວາລອບລວມ ກ່ຽວກັບສິລະປະລວດລາຍແບບພື້ນເມືອງ ຂອງລາວເຮົາ ເປັນຫົວທີສອງ – ຫົວທີໜຶ່ງ ຂ້າພະເຈົ້າເໜັ້ນໜັກໄປກ່ຽວກັບ ການເລີ່ມຕົ້ນຫັດແຕ້ມແບບດອກດວງ ລວດລາຍຕ່າງໆ – ການກຳເນີດເກີດມາຂອງລາຍ, ລັກສະນະສວດຊົງຕ່າງໆ– ລວດລາຍແຕ່ລະແບບ ແຕ່ລະຊະນິດ – ຮູບສັດ, ຮູບເທວະຮູບ. ເພື່ອນຳເອົາໄປໃຊ້ ໃນວຽກງານປະດັບປະດາສິລະປະກຳ ຕ່າງໆ. ເທື່ອນີ້ຂ້າພະເຈົ້າໄດ້ລອບລວມນຳເອົາວິຊາການ ຈາກນັກແຕ້ມທີ່ມີຝີມືເດັ່ນ ມີຊື່ສຽງ ແລະ ໄດ້ສ້າງຜົນງານດ້ານສິລະປະກຳໃຫ້ແກ່ຊາດມາຫລາຍໆແລ້ວ ຊຶ່ງມີຄວາມສ່ຳນິສຳນານໃນດ້ານວຽກງານດັ່ງກ່າວຄື :

– ທ່ານ ລຸງທິດຕັນ–ນັກລັອດ–ແຕ້ມ–ແຂວງຫລວງພະບາງ.

– ທ່ານ ຍາຄູຄຳຜັ້ນ–ນັກປັ້ນ–ດັອດ–ແຕ້ມ–ແຂວງຫລວງພະບາງ.

– ທ່ານ ສຳນານ ປຣິຊາຍານ–ນັກປັ້ນ–ແຕ້ມ–ຫລໍ່–ແຂວງວຽງຈັນ.

ແລະ ພະນັກງານຮັບຜິດຊອບຈຳນວນໜຶ່ງ ເພື່ອເກັບລາຍລະອຽດເຊັ່ນ–ທ້າວສິງສາຄອນ, ທ້າວ ບຸນສົງ, ນາງຈັນສະໝອນ, ທ້າວ ສີບູ່, ທ້າວ ສີລະໝຸດ ລັດຕະນະ, ອານູລົມ ແລະ ບຸນແສງ.

– ສິລະປະລາຍລາວຂອງພວກເຮົາ ນັບວ່າເປັນສິລະປະທີ່ມີຄວາມສວຍງາມທີ່ສຸດ ຊຶ່ງມັນແມ່ນມໍລະດົກອັນລ້ຳຄ່າ ຂອງຊົນຊາດລາວເຮົາ ຊຶ່ງບັນດາຊາວຊ່າງສິລະປະກຳ ແຕ່ລະຍຸກລະໄໝ ໄດ້ສືບທອດ ແລະ ເສີມຂະຫຍາຍຂຶ້ນມາ, ຈົນເປັນການເອກອ້າງຄວາມສາມາດ, ຄວາມຈະເລີນຮຸ່ງເຮືອງ ຂອງຍຸກສະໄໝຕ່າງໆ ຕໍ່ໂລກພາຍນອກໄດ້. ສິລະປະລາຍລາວມັນເປັນສິລະປະທີ່ເຕັມໄປດ້ວຍຊີວິດຈິດໃຈ, ຂະນົບທຳນຽມ ປະເພນີ ແລະ ວັດທະນະທຳຂອງຊົນຊາດລາວເຮົາແທ້ ຢ່າງສົມບູນ –ການເດີນເດືອຂອງລາຍດອກ, ຊວດຊົງຂົດໂງ້ງ, ອ່ອນນອມ–ມັນສະແດງເຖິງແນວຄິດຈິດໃຈແບບເອກະລັກຂອງຊົນຊາດລາວ ທີ່ມີນິດໃສສຸພາບອ່ອນໂຍນ–ແຕ່ລວດລາຍດັ່ງກ່າວ ບໍ່ກະແຈກກະຈາຍ ມັນຈະປະສົມປະສານກັນໄປ ແບບເປັນກຸ່ມ, ເປັນພວດ, ສະຫລັບລັບຊ້ອນກັນໄປ ແບບມີລັກສະນະຄົບຖ້ວນ. ເບິ່ງແລ້ວບໍ່ອຶດອັດໃຈ, ລົງໃຈ, ພໍໃຈ, ຢາກຊົມເລື້ອຍໆ ເບິ່ງບໍ່ເປີດ. ນັ້ນມັນກໍສະແດງອອກອີກຢ່າງໜຶ່ງເຖິງຄົນລາວ ມັນມີຄວາມສາມັກຄີຮັກແພງ ຊ່ວຍເຫລືອເກື້ອກູນ ຊຶ່ງກັນ ແລະ ກັນ ມາແຕ່ບູຮານນະການ–ເໝືອນລວດລາຍພວງດອກໄມ້ປະດັບໄວ້.

– ລອງສັງເກດເບິ່ງເອກດວງຊະນິດຕ່າງໆ–ມັນມີການເສີມຂະຫຍາຍຕໍ່ກ້ານ ຕໍ່ແໜງ ອອກໄດ້ທຸກໆຊະນິດດອກ. ຢ່າງບໍ່ມີທີ່ສິ້ນສຸດ–ຖ້າເອົາລວມ ອີງໃສ່ແນວຄິດສ້າງສັນຂອງມະນຸດ ກໍແມ່ນສືບຕໍ່ຂະຫຍາຍໃຫ້ຈະເລີນງອກງາມຕະຫລອດໄປ –ແຕ່ວ່າດອກລາຍຕ່າງໆ ມັນມີຊວດຊົງແບບພິເສດຂອງມັນ–ແຕ່ເອົາໄປປະສານສົມທົບກັບລາຍອື່ນໆ ກໍຊ້ຳພັດເຂົ້າກັນໄດ້ ສະເພາະລາຍກົມດົກຊະນິດຕ່າງໆ ສິລະປະລວດລາຍປະດັບສິ່ງກໍ່ສ້າງ ສະຖາປັດຕະ–ປູສະນີຍະສະຖານ, ຫໍໂຮງຕ່າງໆ ໃນ

ແຕ່ລະສະໄໝຜ່ານມາ–ເຫັນວ່າສວຍສົດງົດງາມທີ່ສຸດ.ເຊັ່ນ–ຫລັງຄາ,ຊໍ່ຟ້າ, ສີພ້າ, ຮວງເຜິ້ງ, ເສົາ, ຄໍເສົາ, ຂອບຖານ ບົນ, ຂອບລວດ, ບົວຂ້ວາ, ບົວຫງາຍ, ນອກນັ້ນກໍແມ່ນຮູບຊົງສິ່ງກໍ່ສ້າງເຊັ່ນ ວັດວາອາຣາມ ແລະ ບູຮານວັດຖຸຕ່າງໆ– ຊຶ່ງມັນຍັງຍືນເຖິງແບບຢ່າງວັດທະນະທຳທີ່ເປັນເອກະລັກຂອງຊົນຊາດລາວເຮົາແທ້–ເຊັ່ນຕົວຢ່າງບາງອັນຄື ວັດສີສະເກດ– ຫໍໄຕ–ຍອດທາດຫລວງ–ວັດພະແກ້ວ ທີ່ວຽງຈັນ–ວັດໃໝ່, ວັດຊຽງທອງ, ວັດວິຊູນ ແລະ ວັດອື່ນໆ ທີ່ ຫລວງພະບາງ, ພະທາດສີໂຄດຕະບຸນ ແຂວງຄຳມ່ວນ, ທາດອິງຮັງ ສະຫວັນນະເຂດ ແລະ ວັດພູຈຳປາສັກ ຊຶ່ງທຸກໆປູສະນີຍະສະຖານດັ່ງ ກ່າວມັ້ນ ລ້ວນແລ້ວສະແດງອອກເຖິງແນວຄິດຈິດໃຈ ອັນບໍລິສຸດພຸດຜ່ອງ, ຄວາມປຸ້ມລຸມສາມັກຄີ ຂອງປະຊາຊົນບັນດາຊົນ ຊາດຂອງລາວເຮົາ ຮ່ວມແຮງຮ່ວມໃຈກັນສ້າງຂຶ້ນ ເພື່ອເປັນບ່ອນນັບຖື ແລະ ປະດັບເອ້ອວດບ້ານເມືອງຂອງຕົວເອງແຕ່ລະ ຍຸກສະໄໝຕະຫລອດມາ.

ຕາມທິດທາງແນວທາງໃໝ່ ຂອງພັກປະຊາຊົນປະຕິວັດລາວ, ເພີ່ນໄດ້ຍົກສູງວຽກງານສິລະປະວັດທະນະທຳຂອງ ຊາດເຮົາທີ່ຈີບງາມນັ້ນ,ໃຫ້ມີບົນນັບດີເດັ່ນແວວວາວຂຶ້ນ. ປົກປັກຮັກສາ. ປະຕິສັງຂອນ. ເສີມຂະຫຍາຍມູນເຊື້ອອັນຈົບງາມ ດັ່ງກ່າວນັ້ນໃຫ້ມີບົນນັບກ້ວາງຂວາງ ເພື່ອສະແດງໃຫ້ເຫັນເຖິງຊາດລາວ, ທີ່ເປັນເອກະລາດທຸກໆດ້ານ, ແລະ ຍັງຍືນເຖິງ ປະຫວັດສາດແຕ່ລະຍຸກສະໄໝຂອງຊາດລາວເຮົາແຕ່ກ່ອນໆຈົນເຖິງປະຈຸບັນ.

ດັ່ງນັ້ນ, ຂ້າພະເຈົ້າເຊື່ອແນ່ວ່າປຶ້ມຫົວນີ້ ຈະເປັນປະໂຫຍດໃຫ້ແກ່ບັນດາທ່ານ, ທີ່ມີຄວາມສົນໃຈໃນວຽກງານ ການປະດິດແຕ່ງສ້າງສິລະປະ, ສ່ວນໃດສ່ວນໜຶ່ງ– ແລະ ກໍເປັນຄູ່ມືອັນໜຶ່ງ ໃຫ້ແກ່ຄູອາຈານທີ່ຈະສິດສອນ ນັກຮຽນວິຊາສະ ເພາະດ້ານສິລະປະ. ແຕ່ແນວໃດກໍ່ຕາມປຶ້ມຫົວດັ່ງກ່າວນີ້ ຖ້າບັນດາທ່ານທີ່ຮູ້ເລິກເຊິ່ງກ່ຽວກັບວຽກງານດ້ານນີ້, ຊຳນິຊຳ ນານດີ, ຖ້າມີອັນໃດຂາດຕົກບົກພ່ອງ ກະລຸນາໄດ້ຊ່ວຍເຫລືອຕຳນິສົ່ງຂ່າວໄປໃຫ້ພວກເຮົາ ເພື່ອພວກເຮົາຈະໄດ້ຄ່ອຍໆແກ້ ໄຂດັດແປງ ເພື່ອກ້າວໄປເຖິງບ່ອນສົມບູນ ແລະ ດີບຖ້ວນ, ຂໍຂອບໃຈ.

ວຽງຈັນ, ວັນທີ ......................... 1983

ຄົ້ນຄ້ວາ ແລະ ລວບລວມ

ບຸນເລີງ ເວີນວິລະວົງ

# ລາຍປະດັບປະດາ ຂອບຄິໄຟຕ່າງໆ

– ສິນລະປະລາຍລາວ ມັນມີຫລາຍຮູບແບບ, ຫລາຍດອກລາຍ – ປະສົມປະສານກັນ ເພື່ອໃຊ້ປະດັບປະດາ ເປັນລາຍໜ້າກະດານ ເປັນລາຍເອ້ຂອບ, ເອ້ງົກົບ, ສຳລັບຂັ້ນເປັນຂອບຮູບ, ໃຊ້ປະດັບປະດາເອ້ຍ້ອງ ຕາມເສົາໂບດວິຫານ, ພະລັບ ພະລາ, ຫໍພິພິທພັນ – ບູຮານສະຖານຕ່າງໆ – ດັ່ງລາຍຊະນິດຕ່າງທີ່ຈະໃຊ້ເອ້າ ປະດັບປະດາຄື:

- ລາຍດອກຮັກເດືອ
- ລາຍດອກຮັກກູດ
- ລາຍກັນດົກຈົ່ງກາບິນ
- ລາຍຕາອ້ອຍກູດ
- ລາຍຮັກຮ້ອຍ
- ລາຍຮັກຮ້ອຍກູດ
- ລາຍກັນດົກບູຮານ
- ເບິ່ງໜ້າ ແລະລາຍອື່ນໆ
- ລາຍກັນດົກກ້າມປູ.
- ລາຍປະຈຳຍາມບົວເດືອ
- ລາຍກັນດົກຈົງກາບິນງ່ຽງ
- ລາຍກັນດົກຜັກແວ່ນກູດ
- ກ້ານປູລາຍຂອດຜັກແວ່ນ
- ຈົງກາບິນເທດກູດ
- ລາຍປະຈຳຍາມກັນດົກ.

– ນອກນັ້ນຍັງມີສິນລະປະລາຍລາວ ຈຳນວນນຶ່ງທີ່ໃຊ້ເອ້ ແບບລອຍຕົວບໍ່ຕິດກັບໃຜ ແບບລັກຊະນະເອກະລາດ ຄື: ລາຍດອກວັນແລ່ນ – ກະຈັງຮ່ອນ – ກັນດົກຫາງຫົງ – ຊຶ່ງລາຍທັງໝົດເຫລົ່ານີ້ ມັກໃຊ້ເອ້ໜ້າປ້ານລົມ – ສັນຫລັງຄາ – ສັນຂອບຄິໄຟສົບເມນຕ່າງໆ ດັ່ງຕົວຢ່າງແບບລອດລາຍທີ່ຊາວຊ່າງສິລະປະສະໄໝກ່ອນໄດ້ສ້າງຜົນງານຫລາຍໆ ບ່ອນເອົາໄວ້, ມີຫລາຍແບບ, ຫລາຍດອກທີ່ເຫັນວ່າມັນນີ້ມນວນແລະອ່ອນຊ້ອຍດີ, ເມື່ອປະດັບປະດາເຂົ້າໄປແລ້ວເຮັດໃຫ້ສິ່ງກໍ່ສ້າງຕ່າງໆເລົ່ານັ້ນງົດງາມກຶ້ມຂຶ້ນຫລາຍ. ພວກເຮົາໄດ້ພົບເຫັນຫລາຍໆບ່ອນໃນທົ່ວປະເທດຂອງພວກເຮົາ. ເບິ່ງແຕ່ໜ້າ 1 ເຖິງ 46.

---

– ອາຈິບທີ່ຈົ່ວຈ້າ
ມີແຕ່ຕົ້ນເລວຊາມ
ຂື້ນວ່າສິລະປະຊັ້ນ
ລ້ອນແຕ່ມີຄ່າລ້ານ

ບໍ່ຫອນວ່າເຄີຍມີ
ໂງ່ເຂົາເມົາຂ້າ
ອັນດຽວຫລືເລັກໜ້ອຍ
ຖ້າເຮົາຮູ້ຮ່ອມກະທຳ.

# ລາຍປະດັບຂອບກະຈົກ ປະກາດສະນິຍະບັດຕ່າງໆ

– ການປະດັບປະດາຂອບກະຈົກ, ໃບປະກາດສະນິຍະບັດ, ບັດເຊີນ, ເອ້ຜ້າຮ້ານຄ້າ, ເອ້ຜ້າໂຮງມະໂຫລະສົບຕ່າງໆ. ລາຍຕ່າງໆ ທີ່ປະດັບປະດາເອ້ຍ້ອງສິ່ງເຫລົ່ານີ້ສ່ວນມາກ ແມ່ນໃຊ້ລາຍກ້ານປະສົມລາຍກັນກົດເຄືອເກົ່າ, ປະສົມປະສານລາຍກັນຄົກ 3 ໂຕ ລາຍມາກດາບ, ການເອ້ຂອບຕ່າງໆ – ຕ້ອງອີງໃສ່ເນື້ອເລື່ອງຂອງຂອບຮູບນັ້ນໆ – ມັນຈຶ່ງແທດເໝາະ, ແຕ່ການເອ້ຕ້ອງມີສັດສ່ວນດັກແມ່ ຄື ໃຫ້ຂ້າງຊ້າຍ ແລະ ຂ້າງຂວາຕ້ອງເໝືອນກັນ– ຕົວຢ່າງທີ່ພວກເຮົາຍົກໃຫ້ເຫັນແລ້ວໃນຮູບນີ້ – ຊຶ່ງມີຫລາຍແບບທີ່ເປັນຕົວຢ່າງ – ການໃສ່ສີປະກອບນັ້ນຕ້ອງໃຫ້ເປັນສີທີ່ສົດໃສ ແລະ ອ່ອນນອມ. ບໍ່ຄວນໃສ່ເຂັ້ມທີ່ບໍ່ໄດ້ປະສົມກັບສີອື່ນກ່ອນ ເພາະຈະເຮັດໃຫ້ຂອບຂອງເຮົາກືນກິນເນື້ອໃນຫົວເລື່ອງ ຂອງເຮົາໝົດ ລາຍປະກອບແມ່ນຖືປະເພດທີສອງ–ສ່ວນເນື້ອໃນເລື່ອງແມ່ນຖືປະເພດນຶ່ງ ຕ້ອງໃຫ້ເຫັນແຈ້ງກ່ວາຂອບດັ່ງກ່າວທີ່ເລົ່າມາ.

– ການອອກແບບໃບຍ້ອງຍໍ, ໃບປະກາດສະນິຍະບັດ. ຍິ່ງຄວນລະມັດລະວັງເພາະສິ່ງເຫລົ່ານີ້ມັນແມ່ນສິ່ງຍັ່ງຍືນທີ່ມີກຽດສູງ ແລະ ໃຊ້ປະດັບ ເອ້ອວດໃຫ້ມະຫາຊົນໄດ້ເຫັນຢູ່ຕະລອດເວລາ, ດັ່ງນັ້ນ ການອອກແບບ, ການປະສົມສີ, ການຂຽນພັງສີປະກອບ ຈຶ່ງຄວນ ອີງໃສ່ຫລັກວິຊາການ ສິລະປະເຮົາຈຶ່ງຈະໄດ້ຮັບຜົນດີ ແລະ ເປັນໜ້າພໍໃຈແກ່ຜູ້ທີ່ໄດ້ພົບເຫັນ. ລວດລາຍ, ດອກດວງ ປະກອບກໍຕ້ອງແມ່ນລວດລາຍລາວ ທີ່ມີຈັງຫວະຖືກຕ້ອງ, ແມ່ນໃຊ້ລວດລາຍດອກຫຍ້າແທ້ ເພື່ອປະດັບໃຫ້ເໝາະສົມ.ດັ່ງຕົວຢ່າງບາງອັນທີ່ພວກເຮົານຳມາເປັນຕົວຢ່າງໃນທີ່ນີ້. ເບິ່ງໜ້າ 47 ເຖິງ 55.

---

– ກ່ອນໃຊ້ຊື່ຊ້າງ ວ່າເປັນຊ່າງສຳມານສິນ
ກ້າເກັ່ງຜົນງານດີ ກໍເພາະຄວາມພຽນຕັ້ງ
ທັງແນວຄິດຫລັກໝັ້ນ ການເມືອງກໍສອດຄ່ອງ
ຄຸນສົມບັດກໍຖືກຕ້ອງ ປະດິດສ້າງຈຶ່ງຕື່ມງາມ ແທ້ນາ.

# ບາງບົດກ່ຽວກັບເທວະຮູບຕ່າງໆ
# ທີ່ມັກໃຊ້ປະດັບປະດາເອ້ຍ້ອງໃນຍຸກສະໄໝຕ່າງໆຜ່ານມາ

1)– ພຣະວິສະນຸກຳ–ແມ່ນຮູບເທວະດາອົງໜຶ່ງ ຊຶ່ງຖືວ່າແມ່ນນາຍຊ່າງ ຫລື ວິສາວະກອນຜູ້ຍິ່ງໃຫຍ່ ຂອງເທວະດາທັງຫລາຍ ສີເນື້ອເປັນສີຂຽວອ່ອນລະກົດ–ສະແດງເຖິງມີຄວາມສະຫລຽວສະຫລາດ ມີສະຕິປັນຍາແຫລມຄົມ, ມືກ້າຂວາຖືໝາກຈົກ–ນີ້ໝາຍເຖິງການກໍ່ສ້າງພື້ນຖານສະຖາບັນ ແລະ ສະຖາປະນິກຕ່າງໆ–ມືກ້າຊ້າຍຖືລູກດິ່ງ–ນີ້ແມ່ນໝາຍເຖິງ ເຄື່ອງວັດແທກຄວາມຊື່ຕົງທົ່ວໄປຂອງການກໍ່ສ້າງ.

ຊຶ່ງສະໄໝກ່ອນ, ຊາວຊ່າງສິລະປະຂອງພື້ນເມືອງເຮົາ ແມ່ນຖືຮູບດັ່ງກ່າວນີ້ເປັນສັນຍາລັກ, ຖືເປັນຄູບາອາຈານໃຫຍ່ ຂອງວິຊາດັ່ງກ່າວ–ໄທ–ກຳປູຊາ–ກໍ່ຖືວ່າວິສະນຸກຳ ຫລື ພຣະເວດສຸກຳ–ແມ່ນນາຍຊ່າງເທວະດາ ຜູ້ຍິ່ງໃຫຍ່–ຂອງເລື້ອງບູຮານວັນນະຄະດີ.

2)– ພຣະຄະເນດ–ພຣະຄະເນດແມ່ນຮູບເທວະດາອົງໜຶ່ງໂດຍອີງໃສ່ບົດວັນນະຄະດີເກົ່າແກ່ບູຮານ–ມີຫົວເປັນຊ້າງ–ຮູບຮ່າງອ້ວນພີ.ມີສີ່ແຂນ–ແຂນຊ້າຍໜຶ່ງຖືຫົວກະໂຫລກເພື່ອໃສ່ນ້ຳມົນສັກສິດ ເພື່ອໃຊ້ຕາມຈຸດປະສົງນັກ, ມືຊ້າຍຂ້າງລຸ່ມຖືງາເຈົ້າ ຂອງເອງ, ເພື່ອໃຊ້ເປັນອາວຸດປ້ອງກັນສັດຕູທີ່ປອງຮ້າຍ–ມືດ້ານເທິງຖືດອກດອກຈັນ ສະແດງເຖິງວ່າທ່ານນີ້ ມີອຳນາດອັນຍິ່ງໃຫຍ່–ໃນສາມພື້ນພົບ, ຄືແດນສະຫວັນພົບ, ພື້ນນ້ຳບາດານ, ພື້ນມະນຸດໂລກ, ນອກນັ້ນແມ່ນ ມືຂວາຂ້າງລຸ່ມຖືບ້ວງບາດ ເພື່ອໃຊ້ມັດສັດຕູ ແລະ ອຸປະສັກນາໆປະການໄດ້ດັ່ງໃຈນັກ–ພຣະພິຄະເນດນີ້ແມ່ນເປັນເທວະຮູບ, ທີ່ຊາວຊ່າງສິລະປະກຳທັງຫລາຍ ຖືເປັນເຈົ້າອາຈານໃຫຍ່ ແຫ່ງສິລະປະວິທະຍາ, ຮູບສັນຍາລັກສິລະປະກຳຂອງໄທ–ຂະເມນ ແລະ ລາວ ໃນສະໄໝບູຮານຜ່ານມາແມ່ນຖືເອົາເທວະຮູບດັ່ງກ່າວນີ້.

3)– ພະລາມ (ຫລື ພະນາລາຍ) ແມ່ນເທວະຮູບທີ່ຄັດອອກມາຈາກເລື້ອງ ລາມມະກຽນ, ຕອນນີ້ແມ່ນພະລາມແຜງລິດ ກໍ່ຄືແຜງສອນ ໄດ້ແຕ່ງກາຍເປັນມະນຸດລົງມາປາບ ທົດສະກັນ ທີ່ກໍ່ຄວາມວຸ້ນວາຍໃນມະນຸດໂລກ–ຮູບດັ່ງກ່າວນີ້ ເມື່ອປະກອບລວດລາຍກ້ານົດົກຕ່າງໆ ເພີ່ມໃສ່ແລ້ວຍິ່ງງົດງາມຂຶ້ນອີກ–ສ່ວນຫລາຍແມ່ນມັກນຳໃຊ້ປະດັບປະດາບານປະຕູວັດວາອາລາມທົ່ວໄປໃນສະໄໝກ່ອນ.

4)– ນາງກິນນາລີ (ຫລື ນົກນາງທິງ) ນີ້ແມ່ນຊາວຊ່າງສິລະປະກຳ ປະດິດມາຈາກນົກ ຫລື ຈຳພວກສັດທີ່ມີປີກບິນໄດ້ ຍ້ອນຄວາມຮັກທຳມະຊາດ ຂອງ ຊາວຊ່າງສິລະປະ ຄວາມພໍໃຈຕໍ່ສັດ, ຈຶ່ງສະແດງຄວາມຮູ້ສຶກຂອງສັດ ທີ່ມີຊີວິດຊີວາ ເໝືອນມະນຸດທຸກຢ່າງ, ດັ່ງນັ້ນຮູບດັ່ງກ່າວຖ້າເບິ່ງແລ້ວກໍ່ເຫັນວ່າເປັນຮູບສິລະປະທີ່ມີຄວາມງາມລຶກຊຶ້ງແບບໜຶ່ງ ເພື່ອນຳເຂົ້າປະສົມປະສານເອ້ຍ້ອງກັບວຽກງານທາງດ້ານສິລະປະກຳ, ສິ່ງກໍ່ສ້າງແລະອື່ນໆ. ຮູບດັ່ງກ່າວນີ້ຢາກຄືຮູບນາງມະໂນລາ ແຕ່ທາກການນຸ່ງຖື–ຮູບຮ່າງບໍ່ເໝືອນກັນ ມີຕີນເໝືອນນົກ, ມີຫາງເໝືອນນົກ. ຕົວແມ່ເອີ້ນວ່າກິນນະລີ ຕົວຜູ້ເອີ້ນວ່າ ກິນນະລອນ (ຫລື ກິນນອນ)

5)– ນາງມະໂນລາແມ່ນນ້ອງສາວຫລ້າຂອງນາງທັງ 7 –ໃນນິທານເລື້ອງ ສິທົນມະໂນລາ, ມີບາງຮູບເອ້ຢູ່ວັດທາດແຂວງ

ຫລວງພະບາງ ປະຫວັດຫຍໍ້ໆຂອງວັນນະຄະດີເລື່ອງນີ້: ຄືນາງມະໂນລາແມ່ນອາໄສຢູ່ເມືອງພູເງິນ ຊຶ່ງເປັນສະຖານທີ່ໄກແສນໄກ ມະນຸດທີ່ບໍ່ມີບຸນຈະບໍ່ສາມາດໄປເຖິງ ແລະ ເຫັນໄດ້, ນາງມະໂນລາ ເປັນຮູບເໝືອນຄົນຈິງ–ແຕ່ເມື່ອສຸບປີກສຸບຫາງໃສ່ແລ້ວ ສາມາດບິນໄປໄດ້ທຸກແຫ່ງທຸກຫົນ ຕາມໃຈຊອບເໝືອນດັ່ງນົກ...

ດັ່ງນັ້ນຮູບນາງມະໂນລາ ຈຶ່ງມີປີກເໝືອນຮູບນາງກິນນະລີ, ແຕ່ການຊົງເຄື່ອງປະດັບເອ້ຕ່າງກັນ ແລະ ນຸ່ງຖືເໝືອນເທວະຮູບທົ່ວໄປ. ຕີນມືມີຄົບຖ້ວນເໝືອນຄົນຈິງ–ມະໂນລາແມ່ນພັນລະຍາຂອງທ້າວສິທົນ. ຮູບດັ່ງກ່າວນີ້ ຖ້າໃຊ້ປະດັບປະດາເອ້ຍ້ອງ ປະສົມລວດລາຍກັນດົກຕ່າງໆ ເຂົ້າໄປແລ້ວເຫັນວ່າງົດງາມ ຍອດຢ້ຽມທີ່ສຸດ ຊຶ່ງນອກເຮົາບໍ່ມີສຸດຄວາມງາມໄດ້ຢູ່ວັດທາດ ແຂວງຫລວງພະບາງ, ໃນສົມດັ່ງກ່າວນັ້ນ ສ່ວນມາກແມ່ນປະດັບປະດາດ້ວຍຮູບພາບຂອງເລື່ອງສິທົນມະໂນລາ....

6)– ທ້າວ ສິນໄຊແຜງສອນ, ຮູບດັ່ງກ່າວນີ້ ແມ່ນຄັດມາຈາກເລື່ອງ ນິທານວັນນະຄະດີ ອັນຍອດຢ້ຽມຂອງລາວເຮົາເລື່ອງໜຶ່ງ ຊື່ " ເລື່ອງສັງສິນໄຊ " ທ້າວສິນໄຊ ແມ່ນໜຶ່ງໃນຈຳນວນອ້າຍນ້ອງທັງສາມຄື ສີໂຫ ແລະ ສັງທອງ. ຮູບສິນໄຊກຳລັງຈະກົ່ງທະນູ ຫລື ສອນນີ້ແມ່ນຄັດຈາກຕອນໜຶ່ງຊຶ່ງແມ່ນຕອນປາບຍັກກຸມພັນ, ຜູ້ທີ່ໄດ້ລັກເອົາອາຂອງສິນໄຊໄປ, ແລ້ວສິນໄຊຈະນຳເອົາອານັ້ນພີ່ຈາກຍັກກັບຄືນ. ..

ຮູບດັ່ງກ່າວນີ້ ມັກນຳໃຊ້ເອ້ຍ້ອງປະສົມລາຍກັນດົກ ດອກບົວເດືອ ຫລື ຂອດດອກຮັກກູດ, ປະດັບປະດາບານປະຕູສົມ ແລະ ສິ່ງກໍ່ສ້າງສາທາລະນະທົ່ວໄປ, ເຫັນວ່າເບິ່ງແລ້ວແມ່ນງົດງາມຫລາຍ.....

# ແບບກໍ່ສ້າງສະຖາປັດຍາກຳ

ການອອກແບບ ແລະ ການກໍ່ສ້າງສະຖາປັດຍາກຳແຕ່ສະໄໝກ່ອນ, ທີ່ມັກປະດັບປະດາ ດ້ວຍຮູບຈົ່ງສີລະປະລວດລາຍຕ່າງໆນັ້ນ, ຕ້ອງໃຊ້ເວລາອັນເຫິງນານສ້າງໄປຕາມອາລົມທີ່ທຸ່ມທ່ຽງ, ໃຊ້ເວລາປະດິດສ້າງບໍ່ຈຳກັດ ບາງເທື່ອກໍ່ 10 ປີຈຶ່ງແລ້ວບາງຫໍໂຮງ – ບາງວັດກໍ່ 50 ຫລື 100 ປີຈຶ່ງແລ້ວ – ສຸດແລ້ວແຕ່ສັດທາວັດຖຸ ແລະ ແຮງ ໃຈ ຂອງ ມະຫາ ຊົນ ແລະ ຊາວຊ່າງສີລະປະຊຶ່ງຕ້ອງໃຊ້ເວລາປະດັບປະດາເຕັມສ່ວນ, ສີລະປະລວດລາຍກໍ່ມີແຕ່ຄວາມລະອຽດອ່ອນໂຍນ – ຕະລອດທຸກໆ ພາກສ່ວນຂອງສະຖານທີ່. ນອກນັ້ນຍັງຈະຕ້ອງປະດັບດ້ວຍຄຳໃບ, ຕິດມຸກ ແກ້ວຕ່າງໆ ເພື່ອໃຫ້ມີຄວາມສວຍສົດງົດງາມເດັ່ນຕື່ມ.

– ເຊັ່ນ ບາງ ປຸ ສະ ນີ ສະ ຖານ ແຂວງ ຫລວງ, ຕົວຢ່າງວັດໃໝ່ ວັດຊຽງທອງ, ຫໍພິພິທະພັນແຫ່ງຊາດແຂວງຫລວງພະບາງ ( ພຣະຣາຊວັງເກົ່າ ). ວັດສີສະເກດ ວັດພະແກ້ວວຽງຈັນ – ແລະ ວັດພູຈຳປາສັກ. ສີລະປະທີ່ມີລັກສະນະຊາດຂອງລາວທຸກຮູບແບບນັ້ນ ມັນມີອັນຄ້າຍຄືກັນຫລາຍສະເພາະແມ່ນຫລັງຄາ – ການປະດັບປະດາ – ກາບຫົວເສົາ ຕີນເສົາ, ຄໍເສົາ, ຂອບຖານ, ຂອບລວດ, ບົວໜາງຽ, ບົວຂວ້າ, ບົວຫລັງສິງ, ຕີນສິງ, ແລະອື່ນໆ – ຊຶ່ງມັນສະແດງອອກທັງພຶດຈິດໃຈລວມສູນຂອງປະຊາຊົນລາວ, ເບິ່ງແລ້ວກໍ່ຮູ້ສຶກເຂົ້າໃຈງ່າຍ ແລະ ຮູ້ວ່າແມ່ນແບບສະຖາປັດຍາກຳຂອງລາວໂລດ.

– ແຕ່ປະຈຸບັນນີ້ ມັນມີວິວັດທະນາໄປໃໝ່ ຊ່າງອອກແບບໄດ້ປະດິດຄິດສ້າງ ເສີມຕໍ່ເພີ່ມເຕີມໃຫ້ສູງຂຶ້ນຕື່ມ – ຫລັງຄາອາດຍອກຂຶ້ນ – ບໍ່ຕ່ຳ ແລະ ຍ່ອນລົງເໝືອນແບບເກົ່າເໝືອນວັດຊຽງທອງ ແຂວງຫລວງພະບາງ – ນັກອອກແບບໃນຍຸກໃໝ່ ໄດ້ປະ ດິດ ສ້າງ ຂຶ້ນ ໃໝ່ ແຕ່ບໍ່ອອກຈາກຫລັກເດີມ – ເຊັ່ນ ວັດດົງພ້ຽງ. ວັດທາຍໂສກ, ວັດໄຕ ແຂວງວຽງຈັນເປັນຕົ້ນ, ໄດ້ຕັດເອົາຄວາມຫຍຸ້ງຍາກ ແລະ ສັບສົນບາງອັນອອກໄປ ເພື່ອ ໃຫ້ ການ ກໍ່ ສ້າງ ສຳ ເລັດ ໄວ ການປະດັບປະດາກໍ່ບໍ່ສັບສົນ, ການໃຊ້ຈ່າຍສິ້ນເປືອງກໍ່ລຸດລົງ ເວລາການສ້າງກໍ່ບໍ່ຍາວນານ – ໄດ້ພູນໃຊ້ເຕັກນິກແບບທັນສະໄໝ ໃນການອອກແບບການກໍ່ສ້າງເຂົ້າຕື່ມ.

– ສະຖາປັດຍາກຳແບບໃໝ່ ຊຶ່ງນັກວິສາວະກອນລາວ ໄດ້ປະດິດຄິດສ້າງຂຶ້ນອີກກໍ່ດີ – ທີ່ທຳງານກະຊວງການເງິນ, ທີ່ທຳງານກະຊວງພາຍໃນ, ນັກສະຖາປັດນິດໄດ້ອີງໃສ່ຮູບຈົ່ງພື້ນຖານ ຂອງສະຖາປານິດແບບ ລາວ ສະເພາະແມ່ນຫລັງຄາມາປະດິດໃຫ້ທັນສະໄໝຂຶ້ນອີກ, ແລະ ຕັດການປະດັບປະດາລວດລາຍອອກ ເພື່ອໃຫ້ກະທັດລັດແຕ່ກໍ່ສວຍງາມແບບຍຸກສະໄໝນີ້, ອັນດີກໍ່ແມ່ນຮັກສາຫລັກເດີມຂອງລາວໄວ້ໄດ້. ການອອກແບບດັ່ງກ່າວນີ້ ເພາະສຳລັບສ້າງເປັນທີ່ທຳງານຂອງລັດຖະບານ, ອົງການຕ່າງໆ. ຫໍພິພິທະພັນ – ຫໍສະມຸດແຫ່ງຊາດ, ກະຊວງວັດທະນະທຳ ແລະ ສະຖານທີ່ສາທາລະນະຕ່າງໆ, ທຳໃຫ້ຄົນລາວເຮົາ ແລະ ຊາວຕ່າງປະເທດເຫັນແລ້ວກໍ່ຮູ້ສຶກວ່າແມ່ນເມືອງລາວໂລດ ຊຶ່ງມັນມີສີລະປະຂອງຊາດສະແດງອອກໄວ້ຢ່າງເດັ່ນຊັດ – ແຕ່ຖ້າສ້າງເປັນບ່ອນທີ່ນັບຖືເຊັ່ນວັດວາອາຮາມທາງພຸດທະສາສະນາ ຫລືອານຸສາວະລີຕ່າງໆ ນັ້ນຄວນມີສີລະປະປະດັບປະດາເຂົ້າຕື່ມ ເພື່ອໃຫ້ດຶງດູດອາລົມ ແລະ ຈິດໃຈຂອງຜູ້ທີ່ໄດ້ເຫັນໄດ້ຊົມໃຫ້ມີສັດທາໃຈ ແລະ ໜ້ານັບຖື.

ຫ້າມຈຳໜ່າຍ

– ດັ່ງນັ້ນການອອກແບບ – ການປະດັບປະດາຄວນລະມັດລະວັງໃຫ້ດີ, ຄວນເຂົ້າໃຈເຣື່ອງສິລະປະກຳລາວ ລວດລາຍລາວຕ່າງໆ, ເພື່ອປະກອບເຂົ້າກັບສິ່ງກໍ່ສ້າງ, ຄວນເອົາອັນໃດໃສ່ແຕ່ລະພາກສ່ວນ, ຈຶ່ງຈະແທດເໝາະຖ້າເຮົາ ປະດັບປະດາບໍ່ຖືກ – ລົມມຸດວ່າ ສີຟ້າປະດັບປະດາດ້ວຍລາຍຟ້າຂົບ, ຮູບສັດຮ້າຍແບບຕ່າງໆ – ຮູບພາບເຫລົ່ານີ້ທຳ ໃຫ້ອາຄານສະຖານທີ່ດັ່ງກ່າວ, ເບິ່ງແລ້ວເປັນຕາພ້າຍ້ານກົວ – ແທນທີ່ຈະສວຍງາມຕາມຄວາມຄິດມຸ້ງໝາຍເອົາໄວ້.

– ການເອ້ແອມນາງ, ໂງ່ນາກ, ຍອດຫລັງຄາ, ຊໍ່ຟ້າອັນແລ່ນ ແລະ ອື່ນໆ ຄວນຄິດເຖິງລັກເດີມເສັຽກ່ອນ ບໍ່ຄວນດັດແປງຈົນຜິດຈາກເດີມເກີນໄປຫລາຍໂພດ, ອາດຈະເສັຽແບບລັກເດີມ..............ແລະ ລົດຄຸນຄ່າຂອງສິລະ ປະກຳລາວເຮົາໄປ – ດັ່ງສິລະປະກຳລວດລາຍບາງແບບຢ່າງທີ່ພວກເຂົາໄດ້ນຳພິມໃນທີ່ນີ້ ເພື່ອເປັນຊ່ອຍແນວຄິດໃນການ ປະດິດອອກແບບປະດັບປະດາ ໃນການກໍ່ສ້າງສິ່ງສາທາລະນະຕ່າງໆ. ເບິ່ງໜ້າ .........77 ເຖິງ 109

– ຢາກກິນເຂົ້າ ໃຫ້ໝັ່ນເຮັດນາ

ຢາກກິນປາ ໃຫ້ໝັ່ນເຮັດຊ້ອນ

ຢາກຫາຍຄວາມເດືອດຮ້ອນ ໃຫ້ໝັ່ນສຶກສາ

# ສິລະປະລວດລາຍປະດັບສິ່ງກໍ່ສ້າງ

ເພື່ອປະດິດອອກແບບສິລະປະລວດລາຍໃສ່ສິ່ງກໍ່ສ້າງຕ່າງ ໆເຊັ່ນ ຝາປະຕູໂບດວິຫານ – ປະຕູສະຖາປານິກຂອງສິ່ງກໍ່ສ້າງຕ່າງ ໆ – ເພື່ອໃຫ້ໄດ້ຮັບຜົນດີແບບສິລະປະຊັ້ນຍອດນັ້ນ ຕ້ອງອີງຫລັກການຫລາຍຢ່າງເຊັ່ນ :

– ລາຍກັນດົກ, ລາຍຕໍ່ດອກ, ລາຍເຄືອເຖົາ, ຊົງ ແລະ ກາບລາຍ, ການສອດໄສ້, ບາກລາຍ, ແບ່ງຕົວກັນດົກ, ແບ່ງກາບ ແລະ ກ້ານ, ຕັດເສັ້ນຂອງລາຍ, ຈັດພາບຊ່ອງໄຟຂອງພື້ນທີ່, ສະລັບລູກໄມ້ ແລະອື່ນໆ.

ເພາະວ່າການແຕ້ມລາຍປະກອບຕ່າງໆສົມກັບເທວະຮູບ, ພາບສັດຕ່າງໆ, ເປັນເລື້ອງທີ່ສຳຄັນຫລາຍ, ເຮົາຕ້ອງໄດ້ພິຈາລະນາເລືອກຕົວຢ່າງຂອງຊະນິດລາຍເພື່ອປະກອບໃຫ້ຖືກກັບເນື້ອເລື້ອງ, ຫລືເໝາະສົມກັບວັດຖຸທີ່ຈະກໍ່ສ້າງ, ໃນການປະດັບປະດາລວດລາຍລົງໄປ. ຖ້າເຮົາປະດັບປະດາເຂົ້າໄປແລ້ວ ສິລະປະລວດລາຍດັ່ງກ່າວນີ້ ຈະປະກອບໃຫ້ສິ່ງເລົ່ານັ້ນງົດງາມຂຶ້ນ, ພໍດີແລະເໝາະກັບເນື້ອທີ່ຕ້ອງຖືກຕາມຫລັກວິຊາການຈັດພາບຂອງສິລະປະ, ເມື່ອມີຊ່າງສິລະປະນຳເອົາແບບທີ່ເຮົາແຕ້ມອອກແລ້ວໄປປັ້ນ, ໄປຄວັດ, ມັນຈຶ່ງຈະແທດເໝາະ ແລະ ໄດ້ຜົນດີ ເໝາະກັບຄວາມຕ້ອງການຂອງເຮົາທີ່ຢາກໄດ້.

– ຂໍ້ຕໍ່ຫລືບ່ອນອອກຂອງລາຍ ຈະຕ້ອງໄດ້ອີງໃສ່ຫລັກວິຊາການຂອງລາຍ ຖ້າອອກລາຍຫລືຕໍ່ລາຍບໍ່ຖືກເບິ່ງແລ້ວຈະເປັນລັກສະນະຂັດແຍ່ງແລະບໍ່ງາມ – ທີ່ອອກຂອງມັນຈະໄດ້ອີງໃສ່ດີພ້າຂົບ, ລາຍນົກຄາບ, ລາຍນາກຄາບ, ຕາຂອງລາຍ. ຮູບຊົງກາບິນ, ແລະ ຮູບຊົງຕ່າງ ໆ ບາງອັນສຸດແລ້ວແຕ່ຈະເໝາະສົມກັບລວດລາຍທີ່ຈະແຕ້ມຂຶ້ນນັ້ນ. ແລະຕ້ອງຄຳນຶງເຖິງວ່າເມື່ອເອົາຮູບສິລະປະລວດລາຍທີ່ເຮົາສ້າງຂຶ້ນນັ້ນແລ້ວ ໄປປະດັບໃສ່ບ່ອນສິ່ງກໍ່ສ້າງ ຈະແທດເໝາະກັບບ່ອນຕົວຈິງຫລືບໍ່.

– ການແຕ້ມລະຫວ່າງລາຍການເດີນລາຍນັບເປັນເລື້ອງສຳຄັນຫລາຍ ຖ້າເຮົາເດີນລາຍບໍ່ຖືກກໍຈະທຳໃຫ້ສິ່ງກສ້າງເຮົາປະດັບປະດານັ້ນນັ້ນບໍ່ງົດງາມ ເຊັ່ນຊ່ອງໄຟ, ການຂົດໂຄ້ງຂອງລາຍ, ບໍ່ໃຫ້ລາຍເຄືອເຖົານັ້ນຫັກຫລືຂົດງໍແບບບໍ່ຖືກຫລັກສິລະປະແລະຈອດຊົງຂອງມັນ – ລາຍທີ່ຖືກຕ້ອງນັ້ນເຄືອເຖົາຈະຕ້ອງມີຄວາມສຳພັນກັນໂດຍຕະລອດ, ຕ່າງລາຍຕ່າງຊ່ວຍກັນໃຫ້ເກີດຄວາມງາມ ຈຶ່ງຈະໄດ້ຄວາມງາມສົມຄວາມປາຖນາ.

– ນອກນັ້ນກໍແມ່ນການແຍກລາຍ, ຕ້ອງມີຕົວຊ່ວຍແຍກຢ່າງຖືກຕ້ອງນັ້ນຈຶ່ງ ຈະ ງົດ ງາມ ແລະ ບໍ່ແຂງກະດ້າງ ເພາະແຕ່ລະຮູບຊໍ່ຕໍ່ລາຍນັ້ນ ມັນມີລັກສະນະພິເສດຂອງມັນ ທີ່ມີການຮັບເອົາລາຍຕົວອື່ນ ເດີນໄປດ້ວຍຄວາມອ່ອນໂຍນ ແລະ ແຍກລາຍອອກຢ່າງງົດງາມຖືກຕ້ອງ.

– ບໍ່ສູງຫລາຍ, ຕ່ຳຫລາຍ, ກ້ວາງຫລາຍ, ແຄບຫລາຍໂພດເກີນໄປ. ສິລະປະລວດລາຍຕ່າງ ໆ ທີ່ກ່າວມານີ້ຈະຢູ່ໃນຈອດຊົງໃດກໍຕາມຈຳຕ້ອງໄດ້ແຕ້ມໃຫ້ດີ ແລະ ແທດເໝາະກັບຈັດສ່ວນ ຂອງ ມັນ ແລະ ເນື້ອເລື້ອງນັ້ນສະເພີ້ ບໍ່ວ່າກາບຫລືກ້ານຕ້ອງມີຈອດຊົງ, ການສອດໄສ້ລາຍກັນດົກ ການແບ່ງກັນດົກຕ້ອງແບ່ງໃຫ້ເປັນຈັງຫວະເທົ່າ ໆ ກັນແລະ

ເພາະສົມກັນ, ການຕັດເສັ້ນລາຍຕ່າງ ໆ – ການຕັດເສັ້ນກໍ່ມີຄວາມ ສຳ ຄັນ ຫລາຍ, ຈະຕັດເສັ້ນໂດຍຂາດຄວາມລະມັດລະວັງກໍ່ຈະບໍ່ໄດ້, ຕ້ອງໃຫ້ເສັ້ນຂອງລາຍເທົ່າ ໆ ກັນໄປບໍ່ແມ່ນນ້ອຍໂພດຫລືລາງບ່ອນໃຫຍ່ໂພດ.

– ການຈັດຊ່ອງໄຟຫລືພື້ນທີ່ ມັນກໍ່ເປັນເລື້ອງໜຶ່ງທີ່ຄວນເອົາໃຈໃສ່ ເຮົາຕ້ອງກະໃຫ້ລະຍະຊ່ອງໄຟພື້ນເທົ່າ ໆ ກັນ ຫລືໄລ່ເລັ່ຽກັນພຽງເລັກນ້ອຍເທົ່ານັ້ນ – ຖ້າທີ່ຊ່ອງໄຟຖີ່ ໆ – ຫ່າງ ໆ ສັບປົນກັນມັນຈະຂາດ ຄວາມ ງາມ ເພາະ ວ່າການເບິ່ງສິລະປະລວດລາຍເບື້ອງຕົ້ນແມ່ນຊ່ອງໄຟ ພື້ນ, ຕໍ່ມາກໍ່ແມ່ນການເດີນລາຍແບບຕ່າງ ໆ ປະສົມຮູບຊົງ, ຖ້າຊ່ອງໄຟບໍ່ມີໄລຍະແທດເໝາະຫລ້ອຈະເຮັດໃຫ້ຮູບເທົ່ານັ້ນໝົດຄວາມງາມໄປ.

– ດັ່ງນັ້ນການແຕ້ມແລະອອກແບບຂອງສິລະປະລວດລາຍໃຫ້ໄດ້ດີນັ້ນ ຕ້ອງໄດ້ຮູ້ຫລັກການຕ່າງ ໆ ທີ່ກ່າວມາຂ້າງເທິງນີ້.

ຍົກຕົວຢ່າງຫລາຍ ໆ ແບບທີ່ຊາວຊ່າງສິລະປະກຳ ຍຸກກ່ອນຈົນເຖິງຍຸກປະຈຸບັນ ທີ່ເຮົາໄດ້ເກັບກຳເອົາບາງຕອນມາເປັນຕົວຢ່າງເຊັ່ນ – ຮູບລາຍປະຕູວັດວິຊຸນ, ວັດຊຽງທອງ, ວັດແສນແຂວງຫລວງພະບາງ ຊຶ່ງເປັນຜົນງານຂອງສິລະປະກຳໃນສະໄໝກ່ອນ – ແລະ ບາງຮູບທີ່ຊ່າງສິລະປະກຳຍຸກໃໝ່ ແຂວງຫລວງພະບາງ ແລະ ວຽງຈັນໄດ້ປະດິດ ແຕ້ມ ຂຶ້ນ

ເບິ່ງໜ້າ ......120 ເຖິງ 127

## ບາງພາສິດ

– ສິລະປະເປັນເຄື່ອງເອ້ ປະດັບຊາດພາສາ
ວັດທະນະທຳເປັນເຄື່ອງໝາຍ ແຫ່ງຄວາມຈະເລີນກ້າວ
ວັນນະຄະດີເປັນນິມລ້ຽງ ສິລະປະກຳຂອງຊາດ
ຖ້າວ່າສິລະປະບໍ່ຕົກແຕ່ງເອ້ ເມືອງບ້ານກໍ່ບໍ່ງາມແທ້ນາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ**

**ກະຊວງ ວັດທະນະທຳ**

**ກົມ ສິລະປະກຳ**

---

# ຄຳເຫັນຂອງກົມ

ເພື່ອຮັກສາສິລະປະວັດທະນະທຳ ອັນຈົບງາມຂອງຊາດລາວເຮົາໄວ້. ໃຫ້ນັບມື້ນັບຈົບງາມຍິ່ງໆຂຶ້ນ. ແລະ ເພື່ອປະຕິບັດຕາມທິດທາງ, ແນວທາງໃໝ່ຂອງພັກ ແລະ ລັດຖະບານເຮົາ ຕໍ່ບັນຫາສິລະປະວັນນະຄະດີ ແລະ ສິລະປະກຳ ໃນການເສີມຂະຫຍາຍ, ແລະ ປົກປົກປັກຮັກສາສິ່ງຍອດຍິ່ງ ແລະ ຈົບງາມຂອງຊາດເຮົາໄວ້. ເຜີຍແຜ່ ແລະ ເປັນບົດຮຽນແກ່ຜູ້ທີ່ຝັກໄຝ່ວຽກງານທາງດ້ານສິລະປະ – ຂ້າພະເຈົ້າຈຶ່ງໄດ້ມອບວຽກດັ່ງກ່າວນີ້ ໃຫ້ແກ່ ທ່ານ ບຸນເລີງ ເວີນວິລາວົງ ຮອງຫົວໜ້າກົມສິນລະປະກຳ ຄົ້ນຄ້ວາລວບລວມເອົາປຶ້ມປະຫວັດສາດ, ອາຈານທີ່ຈຳນີຈຳນານຕາມວັດວາອາຣາມ ແລະ ປູຊະນີຍະຖານຕ່າງໆ ໃຫ້ເປັນປຶ້ມພາກທີໜຶ່ງສຳເລັດໄປແລ້ວໃຫ້ເລີ່ມພາກທີສອງຕໍ່ – ໂດຍລົມທົບຫລາຍໆນັກແຕ້ມລວບລວມນຳຄື: ທ້າວສີບູ່, ສິງສາຄອນ, ທ. ບຸນສົງ, ນາງຈັນສະໝອນ.

ປຶ້ມເຫລັ້ມດັ່ງກ່າວນີ້ ເປັນປຶ້ມສິລະປະລາຍລາວ ເຫລັ້ມທີສອງ ອອກສູ່ສາຍຕາພໍ່ແມ່ປະຊາຊົນ, ພາຍຫລັງປະເທດຊາດຂອງພວກເຮົາໄດ້ປົດປ່ອຍມາ – ປຶ້ມເຫລັ້ມນີ້ມີລັກສະນະຄົບຖ້ວນພໍສົມຄວນ. ຊຶ່ງຈະນຳເອົາໄປໃຊ້ວຽກງານດ້ານສຶກສາ, ດ້ານວິຊາສະເພາະ, ຊ່ວຍຄູອາຈານສອນ, ຊ່ວຍນັກຊ່າງຕ່າງໆ ໃນການປະດັບປະດາເອຢ້ອງສິ່ງກໍ່ສ້າງ, ຜະລິດຕະພັນ ແລະ ເຄື່ອງວັດທະນະທຳ. ໃຫ້ມີລັກຊະນະຊາດ. ກົມສິລະປະກຳ ກະຊວງວັດທະນະທຳ ຈຶ່ງເຫັນດີຕົກລົງພິມເຜີຍແຜ່ ໃຫ້ກວ້າງຂວາງ, ເພື່ອຮັກສາໄວ້ຊຶ່ງສິລະປະກຳອັນຈົບງາມຂອງຊາດເຮົາ.

ກົມສິນລະປະກຳ ຂໍຊົມເຊີຍຄວາມພາມະອົດທົນ, ເອົາໃຈໃສ່ຜ່ານຜ່າຂໍ້ຫຍຸ້ງຍາກນາໆປະການ ໃນການຄົ້ນຄ້ວາ ແລະ ລວບລວມວຽກງານດັ່ງກ່າວຈົນສຳເລັດ ຂອງບັນດາສະຫາຍທີ່ຮັບຜິດຊອບ – ແຕ່ແນວໃດກໍຕາມບົດຮຽນ ແລະ ການແນະນຳຕ່າງໆຂອງປຶ້ມເຫລັ້ມນີ້, ຫລືການຂີດແຕ້ມຕ່າງໆ – ພາຍຫລັງບັນດາທ່ານຜູ້ທີ່ຈຳນີຈຳນານທັງຫລາຍຫາກຊົມໃຊ້ແລ້ວມີອັນໃດຂາດຕົກບົກພ່ອງບໍ່ເໝາະສົມ ໂປຣດໄດ້ກະລຸນາຕຳນິສົ່ງຂ່າວໄປຍັງກົມພວກເຮົາ ເພື່ອພວກເຮົາຈະໄດ້ດັດແປງແກ້ໄຂເພີ່ມຕື່ມ ໃຫ້ນັບມື້ນັບສົມບູນຂຶ້ນ.

ວຽງຈັນ, ວັນທີ ............................ 1983

ຫົວໜ້າກົມສິລະປະກຳ.

ປະເສີດ ສີຊາປົນ

# ສາລະບານ


| | | |
|---|---|---|
| – ລາຍແທງ ຍອກກ້ອຍ | ໜ້າ | 1 – 2 |
| – ລາຍປະດັບຂອບດີໄຟແບບຕ່າງໆ | " | 3 – 11 |
| – ລາຍເຊີງແຜ, ປະດັບຕີນຂອບງານຕ່າງໆ | " | 12 – 13 |
| – ລາຍມັງກອນຄາບແກ້ວ – ລາຍນາກຈຳແລງ | " | 14 – 19 |
| – ລາຍປະດັບເອ້ຈັດຕຸມຸກແບບຕ່າງໆ | " | 20 |
| – ລາຍປະດັບເອ້ດູກງ | " | 21 |
| – ລາຍຂອດແບບຕ່າງໆ | " | 22 – 23 |
| – ລາຍເອ້ຂອບແບບສິລະປະຫລວງພະບາງ | " | 24 |
| – ລາຍສອຍສາ – ດອກຟອກແຄມເຣືອຊ່ວງ | " | 25 – 27 |
| – ລາຍດອກຟອກເສົາ ແລະ ເພດານ ແບບສິລະປະຫລວງພະບາງ | " | 28 – 31 |
| – ລາຍປະດັບແບບຕ່າງໆ | " | 32 – 33 |
| – ລາຍປະດັບແຈສາກ, ມູມຕ່າງໆຂອງການກໍ່ສ້າງ | " | 34 |
| – ລາຍຂອດແບບຕ່າງໆ | " | 35 – 42 |
| – ລາຍເອ້ຊູມປະຕູ | " | 43 – 44 |
| – ລາຍເອ້ດູກງ – ເພດານ | " | 45 |
| – ລາຍດອກຟອກແບບຕ່າງໆ | " | 46 |
| – ລາຍເອ້ຂອບຮູບ – ປະກາດສະນີຍະບັດ – ໃບຍ້ອງຍໍ | " | 47 – 55 |
| – ລາຍປະດັບສີໜ້າ | " | 56 – 62 |
| – ກະໂຈມຫົວແບບຕ່າງໆຂອງເທວະຣູບ ທ້າວ, ນາງ | " | 63 – 64 |
| – ພຣະອິສະມຸກຳ | " | 65 |
| – ພຣະຄະເນດ | " | 66 |
| – ພຣະລາມແຜງສອນ – ພຣະຣາມເດີນດົງ | " | 67 – 68 |
| – ນາງກິນນາລີ – ຫລີມົກນາງຫົງ | " | 69 – 70 |
| – ນາງມະໂນລາເຫີນຟ້າ | " | 71 – 72 |
| – ສິນໄຊແຜງສອນ | " | 73 |
| – ນາງຟ້າອອຍພອນ | " | 74 |
| – ຫານຸມານແຜງລິດ | " | 75 |

| | | |
|---|---|---|
| – ທ່າທີຂອງເທວະຣູບຕ່າງໆ | ໜ້າ | 76 |
| – ໂງ່ນາກແບບຕ່າງໆ | " | 77 – 78 |
| – ກາບພິມມະສອນ ແລະ ປະກາຍສອນ | " | 79 – 80 |
| – ແຂນນາງ ຫລື ຄັນທວາຍ, ແລະ ສັນຫລັງຄາ | " | 81 – 88 |
| – ຫົວນາກປະດັບ ແລະ ຫາງຫົງ | " | 89 – 95 |
| – ລາຍຊູມປະຕູ ແລະ ຮອງເຜິ້ງ | " | 96 – 98 |
| – ເສົາຕ້າຍ ແລະ ແບບຕັ້ງ | " | 99 |
| – ຍອດທາດແບບຕ່າງໆ | " | 100 – 103 |
| – ລາຍປະດັບກາບເສົາແບບຕ່າງໆ | " | 104 |
| – ຮູບໂຄງຮ່າງຫລັງຄາ – ຍອດທາດ – ແລະ ສົບເມນຕ່າງໆ | " | 105 – 109 |
| – ລາຍດອກປະຕູສິມວັດໄຊຍະພູມແຂວງສວັນນະເຂດ | " | 110 |
| – ລາຍປະຕູສິມວັດຊຽງທອງ ຫລວງພະບາງ | " | 111 – 113 |
| – ລາຍບານປະຕູວັດແສນ ຫລວງພະບາງ | " | 114 |
| – ລາຍບານປະຕູວັດວິຊູນ | " | 115 – 120 |
| – ປະດິດອອກແບບລາຍບານປະຕູແບບຕ່າງໆ | " | 121 – 127 |

# ບົດທີ 1





– ລາຍະເທງປວກກ້ວຍ ໃຊ້ປະດັບປະສາດ ປະສາດເພິ້ງ ຊຶ່ງບັນດາຊາວຊ່າງມະຫາຊົນທົ່ວໄປ ມັກນຳໃຊ້ເຂົ້າໃນການ ປະດັບປະດາເອ້ຍ້ອງ

ແບບໂບຮານ, ແຫ່ງປວສສາລັຍ. ( ບົດທີ 1(ຕໍ່)



## ບົດທີ. ໒
## ລາຍປະດັບຂອບຄີໄຟແບບຕາງໆ.



ລາຍດອກຮັກເຄືອ



ດອກກັນຕົກ ເຄືອ



ກັນ ຕົກປະສົມ ກະຈັງຮວ່ນ



ດອກຊໍ່ງກາຍປົມກູດ

ບົດທີ.໒ (ຕໍ່)



ດອກກະຈັງຕາອ້ອຍຊຸດ



ດອກວັນເລ່ນ



ດອກກັ້ນດົກກັ້ນປູ



ດອກປະຈຳຍາມ ບົວເຄືອ

ບົດທີ ໓



ດອກກັນດັກຊີ້ຽກາງປິນງ່ຽງ



ຕາງອົຍຊຸອົນ



ກັນດັກຜັກແວ່ນກູດ



ກ້ານປູລາຍຂອດຜັກແວ່ນ



ລາຍຫັບຫາງ

ບັດທີ 3 (ຕໍ່)





ລາຽດອກປະຈຳຍາມກັນດົກ





ລາຽກັນດົກສູດ ບູຮານ



ລາຍດອກຊ້ຽງກາງບົ້ນ ເຫດສູດ





**ກະຈັຽຮ່ວມຊຸອັນ**

ບົດທີ 4



ລາຍດອກຊ້ຽງການບິນກູດ



ລາຍໜ້າຂົບໜ້າສິງ



ລາຍກ້ານປູກູດ



ລາຍກາບບົວຫົວເສົາ



ລາຍເຄືອ ດອກຜັກກູດ.



ລາຍດອກກາບບົວຊ້ອນ



ກະຈັງຮ່ວນຍ່ອນ ລາຍປົວ

## ບົດທີ 4 (ຕໍ່)



ລາຍດອກກາວົນປູ



ລາຍກ້ານດົກຜັກແວ່ນ



ລາຍດອກກາວົນປູທີ່



ລາຍດອກກູດ



ດອກກາວົນປູຜັກແວ່ນ



ລາຍກ້ານດົກກູດ

## ບົດທີ 5



ລາຍຣັກຣ້ຽ



ລຸ່ມ, ເທິງ, ລາຍກ້ານດົກທູດເຄືອ





ຊີງຫາງບິ້ນເຄືອ

ບົດທີ 5 (ຕໍ່)



ກະດັງງາລາຍເຄືອ



ກ້ານດອກເຄືອກູດ



ເທິງ, ລຸ່ມ, ກະດັງງາກ້ານດອກເຄືອ.



ບົດທີ 6





ລາຍກ້ານຕົກຫາງຫົງ



ລາຍກ້ານຕົກຫາງຫົງຂູດ



ລາຍນາຄກ້ານຕົກ.

ບົດທີ 7





ລາຍດອກປະດັບເຊີງແຜ,     ປະດັບລີ້ນຂອບຖານລ່າງໆ
ລາຍສິລະປະແບບຂອງທ່ານ ຊ່ຳນານ ປຣີສາຍານ

ບົດທີ.໔



ລາຍດອກປະດັບເຊີງແພ ແລະ ຂອບວິງແບບຕ່າງໆ

## ບົດທີ ໑



ລາຍມັງກອນກາງແກ້ວ, ລາຍນາກຈຳແລງ,
ໃຊ້ສຳລັບປະດັບຂອບກີໄພ ແລະອື່ນໆ

## ບົດທີ ໑໐



ລາຍປະດັບຂອບກິໄຟ ແລະ ຕີນຖານຕ່າງໆ

ບົດທີ ໑໐ (ຕໍ່)



ລາຍປະດັບຂອບກິໄຟແບບຕ່າງໆ

ບົດທີ 10 (ຕໍ່)



ບົດທີ 11



ລາຍເອ້ຂອບຮູບ, ກິນນະລີ ປະສົມກັບດິກ ແລະ ດອກບົວເຄືອ

ບົດທີ 11 (ຕໍ່)



ລາບເອ້ອບຮູບ, ກິນນະລີ ປະສົມກັບດົກ ແລະ ດອກບົວເຄືອ

## ບົດທີ 12.



ລາຍປະດັບເອ້ ຈັ້ດຕຸມຸກ ແບບຕ່າງໆ

ບົດທີ 13



ລາຍປະດັບເອັດູທາງ ສິລະປະແບບຫຼວງພະບາງ



## ບົດທີ 14

ລາຍຂອດແບບຕ່າງໆ.









## ບົດທີ 15





ລາຍຂອດແບບຕ່າງໆ





ບົດທີ 15 (ຕໍ່)

ລາຍເອ້ຂອບ ສິລະປະແບບຫຼວງພະບາງ.







24 / VII
ຫ້າມຈຳໜ່າຍ



ບັດທີ 16.

ລາຍຊ້ອຍສາ ດອກພອກແລນ(ເຮືອຊ່ວ)



ບົດທີ 16 (ຕໍ່)

ລາຍຊ້ອຍສາດອກຍອກແຄນເຮືອຊ່າງ



## ບົດທີ 16 (ຕໍ່)



ລາຍປະດັບແຄມ
ເຮືອຊ່ວງ, ລວງເຊີງແຜ



## ບົດທີ 17



ລາຍດອກພອກເສົາ ແລະ ເພດານ





ດອກພອກຊ້ຽກາບິມ







ລາຍຂອດດອກຈັກ ແບບຕ່າງໆ

## ບົດທີ 19



ລາຍດອກພອກແບບຕ່າງໆ

## ບົດທີ 19 (ຕໍ່)

ລາຍດອກພອກ



ລາຍດອກເສົາແລະເພດານ



## ບົດທີ ໒໐



ລວຍປະດັບແບບຕ່າງໆ
ລາຍສິລປະຍາລູຄ່າຟັ້ນ









ລາຍຊໍ່ກາບົມ ປະສົມທັນຕິກ

ປະດັບຂອບ







## ບົດທີ 21



ລາຍປະດັບເຈສາກ



ຕາລະບັດກາຍເທດ





ແຂ່ວຍັກ



ຫາງຫົງ

# ບົດທີ ໒໒

## ລາຍຂອດແບບຕ່າງໆ.





ຂອດດອກຮັກຮັນກິງ ແບບຕ່າງໆ

ຂອດຫົວນາກ







## ບົດທີ 22 (ຕໍ່)





ລວດດອກກຣັກ ຕ່າງໆ





ລວດດອກກຣັກ ປະຈຳຍາມ.

## ບົດທີ 23

ຂອດຊ້ຽງກາບິນ





ສ້ວຍສາ





ຂອດທັນຄົກ

ດອກສັກຕ່າເຄືອ

## ບົດທີ 23 (ຕໍ່)





ລາຍຊອກປະດັບໄມ້ແມ່ລັບປະຕູ





# ບົດທີ 24



ລາຍດອກທັນກົກປະສົມຈຽງເທດ
ເອ້ເສົາ ແລະ ຂຸມປະຕູ

ບົດທີ 25



ລາຍກາບບົວດອກຮັກ ພື້ນເມືອງລາວ.



ລາຍກາບບົວດອກພອກ



ລາຍກາບບົວເທພະນົມ



ລາຍກາບບົວຫາງຫົງ

ບົດທີ 26



ຂອດດອກຮັກ



ຂອດຈຸ້ງຫາງບິນ



ຂອດດອກຮັກແບບມົ່ງ



ດອກຮັກທໍ່ເຄືອ

## ບັດທີ 26 (ຕໍ່)



1



2

ຂອດດອກຮັກແບບຕ່າງໆ -
1. 2. 3. 4.



3



4

ບົດທີ 27

ລາຍເອ້ຊຸມປະຕູ.



ຫັນດົກກູດ ດອກຮັກບູຮານ



ບົດທີ 27 (ຕໍ່)

ລາຍຂອດດອກຮັກເປຍຕ່າງໆ.



ເອ້ດູກາ ແລະລາຍດາວ. ບົດທີ 28



ບົດທີ ໒໙

ລາຍດອກພອກ, ສິລະປະຫຼວງພະບາງ







# ບົດທີ ໓໐

ແບບຂອບຮູບປະກາດສະນີຍະບັດ ແລະ ໃບບ້ອງບໍຕ່າງໆ





## ບົດທີ ໓໐ (ຕໍ່)

ລາຍເອ້ຂອບປະກາດສະນີຍະບັດ, ຫລືໃບຍ້ອງຍໍຕ່າງໆ
ແບບນາກຄາບ. ປະສົມກັບດົກ



ບົດທີ ໓໐ (ຕໍ່)









ບົດທີ ໓໐ (ຕໍ່)



## ບົດທີ ໓໐ (ຕໍ່)



ບົດທີ 31

ລາຍເອ້ຂອບຮູບ ແບບກິນນະລີປະສົມກັນດົກ,ແລະ
ແບບກັນດົກບົວເຄືອ









ບົດທີ 31 (ຕໍ່)



ລາຍດອກບົວເຄືອ

## ບົດທີ 31 (ຕໍ່)



ລາຍດອກບົວເຄືອ

ບົດທີ ໓໑ (ຕໍ່)



ແບບຂອບຮູບກັບດົກເຄືອ, ແລະໃບເທດ .

# ບົດທີ ໓໒



ລາຍຮູບເທພະນົມ




ຊົງເທພະນົມເທບສົ່ງ.

## ບົດທີ 32 (ຕໍ່)



ລາຍເອ້ສີໜ້າ ດອກກັກຊ້ງເທພະນົມ

ລາຍເອ້ສີໜ້າ ຊ້ງດອກກວັກ



ບົດທີ ໓໓.

ລາຍປະດັບແຈສາກ ແລະປະດັບສີໜ້າ



ນາຄລາຍກັນຕົກ.

ຈົງນາຄກ້ຽວ





ຊົງເທພະນົມ. ກາບບິນ

ສີໜ້າຊົງເທພະນົມ



ບົດທີ 34

ເອ້ແຈສາກ, ແລະສີໜ້າ, ລາຍກັນດົກເຄືອ, ນາກຄູ່.



## ບົດທີ 34 (ຕໍ່)

ເອົາສີໜ້າແບບຕ່າງໆໆ.



ຫານຸມານ





# ບົດທີ 35

## ກະໂຈນຫົວແບບຕ່າງ ໆ ຂອງເທວະຣູບ – ທ້າວນາງ



## ບົດທີ ໓໕ (ຕໍ່)

ກະໂຈນຫົວແບບຕ່າງໆ ຂອງເທວະຮູບ - ທ້າວນາງ



24 / VII

# ບົດທີ ໓໖



ພຣະວິສະນຸກຳ, ນາຍຊ່າງຜູ້ຍິ່ງໃຫຍ່ ແຫ່ງເທວະດາທັງຫລາຍ

## ບົດທີ 37



ພຣະຄະເນດ ເຈົ້າແຫ່ງສິລະປະວິທະຍາ

ບົດທີ ໓໘



ເບະລາມແຜງສອບ

## ບົດທີ ໓໘ (ຕໍ່)



\- ພະລາມເດີນດົງ

# ບົດທີ ໓໙



ນົກນາງຫົງ ຫລື ນາງກິນນະລີ

ບົດທີ ໓໙ (ຕໍ່)



## ບົດທີ 40



ນາງມະໂນລາເຫີນຟ້າ.

ບົດທີ 40 (ຕໍ່)



ນາງມະໂນລາເຫີນຟ້າ (ແບບໜຶ່ງ)



ສິນໄຊແຜງສອນ ປາບຍັກກຸມພັນນາງຮ້າຍ

# ບົດທີ 42



ນາງຟ້າອ່ວຍພອນ

## ບົດທີ 43



ທະນຸມານແປງລິດ, ທະຫານເອກຂອງພະລາມ

## ບົດທີ 44

## ທ່າທີຂອງເທວະຮູບແບບຕ່າງໆ



ທ່າ ທ້າວ ຍົກຄັນທະນູ



ທ່າ ທ້າວຍ່າງ.



ທ່ານາງຍ່າງ

## ບົດທີ 45

ໂງ່ນາກແບບຕ່າງໆ
ໄຊ້ສຳຫລັບ ປະດັບ ຫລັງຄາ ສີມ, ອາຮາມ,
ແລະສິ່ງກໍ່ສ້າງ ສາທາລະນະທົ່ວໄປ.



ບົດທີ 46

ລາຍໂງ່ບາກແບບຕ່າງໆ



ບົດທີ 47



ກາບພິມມະສອນ ແລະ ປະກາບສອນແບບຕ່າງໆ

ບົດທີ 47 (ຕໍ່)



## ບົດທີ 48



ແຂນນາງຫລືຄັນດາວາຍແບບຕ່າງໆ

ບັດທີ 48 (ຕໍ່)



ບົດທີ 4໑



ບົດທີ ໕໐

ຮູບລາຍປະດັບແຂນນາງ, ຫົວນາກ ແລະ ແບບເທພະນົມ



ບົດທີ 50 (ຕໍ່)

## ແຂນນາງ ແບບຕ່າງໆ





ແບບກາບຫົວເສົາ

# ແຂນນາງແບບຕ່າງໆ





ລາຍປະດັບສັນຫລັງຄາ
ແລະປ້ານລົມ



## ແຂນນາງແບບຕ່າງໆ









ວັນແລ່ນ, ປ້ານລົມ.

## ຮູບທີ 50 (ຕໍ່)

ແຂນນາງຮູບນາກ



ແຂນນາງຮູບຫານຸມານ





ລາຍປະດັບຂອບ



ປະດັບແຈຕີນເສົາ

## ບົດທີ 51

ຫົວນາກຊ້ອນ, ແລະຫາງຫົງ
ໄຊ້ປະດັບຫົວຍັ້ງໄມ້, ລົດແຫ່
ແລະອື່ນໆ.





ບົດທີ 51 (ຕໍ່)

ຮູບນາກ, ໄຊ້ເອ້ເຍ່ຂັ້ນໃດ



## ບົດທີ 31 (ຕໍ່)



## ບົດທີ 51 (ຕໍ່)

ແມ່ຂັ້ນໃດ.ຮູບນາກ



# ບົດທີ 52

ນາກກ້ຽວ

ຫົວສິງ





ແມ່ຂັ້ນໃດຮູບນາກ



ບົດທີ 52.(ຕໍ່)



ແມ່ຂັ້ນໃດ, ຮູບຫົວນາກແບບທາງຫລວງ.

24/VII
ห้ามจำหน่าย



## ບົດທີ 53



ຫົວຂັ້ນໃດ ແບບຫລວງ
ພຣະບາງ



ລາຍປະດັບ
ລາຍກາງ



ລາຍຊົງ, ຫົວຊຸ້ມປະຕູ.



ລາຍແຈ

## ບົດທີ 54



ລາຍປະດັບ, ຊຸ້ມປະຕູໂຂງຮອງເຜີ້ງ
ແບບຕ່າງໆ



## ບົດທີ 54 (ຕໍ່)



ລາຍປະດັບ ຊຸ້ມປະຕູໂຂງຕ່າງໆ.



ລາຍປະດັບແຂ ແລະ ຄີ້ວຖານສິມ

ຮູບທີ 54 (ຕໍ່)



ລາຍຮວງເຜີ້ງ
ເພື່ອປະດັບປະດາໂຂງ
ຫາງເສົ້າປະຕູຕ່າງໆ



ລາຍເອ້ຂອບຄີໄມ້ ແບບຫລວງພຣະບາງ

## ບົດທີ 55

ເສົາຫາ້ຍ, ຫົວຄັ່ງແບບຕ່າງໆ.



ແບບໂຕະຕັ້ງເຄື່ອງບູຊາພຣະ



# ບົດທີ 56

## ແບບຍອດທາດ ບູຮານສະຖານ
## ເຂດວຽງຈັນ ແລະຫລວງພຣະບາງ







# ບົດທີ 57

## ແບບຍອດຫໍຕ່າງໆ



## ບົດທີ 58

### ຍອດທາດ ແລະ ແບບປະດັບປະດາສິ່ງກໍ່ສ້າງ





ໃບເສມາແບບຕ່າງໆ



ຖານກໍ່ສ້າງຕ່າງໆ

## ບົດທີ ໕໑

### ຮູບແບບກໍ່ສ້າງສິລະປະ ແບບພື້ນເມືອງຕ່າງໆ



## ບົດທີ ໖໐



ລາຍກາບເສົາແບບຕ່າງໆ



247VII

ບົດທີ ໑

ຮູບຫລັງຄາ, ຍອດທາດ,ແລະສັບເຍຍແບບຕ່າງໆ.



ຮູບທີ ໖໑ (ຕໍ່)



ບົດທີ ໖



ປົດທີ ໒໔ (ຕໍ່)

ຍອດທາດແບບຕ່າງໆ.



ບົດທີ ໒ (ຕໍ່)

ຍອດທາດແບບຕ່າງໆ







ບົດທີ ໖໓.

ລາຍດອກປະດັບບານປະຕູສິມ ແລະດູກຸປະຕູ
ວັດໄຊຍະພູມ ແຂວງສວັນນະເຂດ.



ບົດທີ 64.



ລາຍບານປະຕູສິມ
ວັດຊຽງທອງ ແຂວງ
ຫລວງພະບາງ.

ແບບ.1.2.3.4-5.



ແບບ.2. ບົດທີ 64(ຕໍ່)ແບບ.3





ບົດທີ 64 (ຕໍ່)

ແບບ-4-



ແບບ-5-





ບານປະຕູວັດແສນ ແຂວງຫລວງພະບາງ.

ບົດທີ ໖໖.



ລາຍບານປະຕູສິມວັດວິຊຸນ . ຫລວງພະບາງ.

ບົດທີ 67



ລາຍບານປະຕູສິມ, ແຂວງຫລວງພະບາງ

ບັດທີ ໖໗ (ຕໍ່)



ລາຍບານປະຕູ ແບບຕ່າງໆ

ບົດທີ 67 (ຕ່).



ລວຍບານປະຕູແບບຕ່າງໆ.



ລາຍບານປະຕູແບບຕ່າງໆ.



ລາຍບານປະຕູ ແບບຫລວງພະບາງ

# ບົດທີ ໖໙



ພະລາມເດີນດົງ



ການຕໍ່ສູ້ລະຫວ່າງ ພະຍາຄຸດແລະພະຍານາກ.



ນົກຫົງ ປະສົມ ເຄືອວັນດົກ.



ນາງສີດາເດີນດົງ.

# ບົດທີ 70.



ນາງມັດສາ , ຫານຸມານຂອດຣັກ

ບົດທີ 70 (ຕໍ່)



ລາຍບານປະຕູແບບຕ່າງໆ

# ບົດທີ 71



ຮູບປະກອບລາຍ

ບົດທີ 71 (ຕໍ່)



ຮູບປະກອບລາຍ.

## ບົດທີ 71 (ຕໍ່)





ຮູບປະກອບລາຍ.